## ການແບ່ງປັນມູນມໍຣະດົກທີ່ດິນລະຫວ່າງພວກລູກຂອງຜູ້ເສຍຊີວິດ

1. ຖ້າວ່າຜູ້ເສຍຊີວິດຫາກມີພຽງແຕ່ລູກຄີງເທົ່ານັ້ນມໍຣະດົກທັງໝົດ ທີ່ເປັນສິນສົມສ້າງ ແລະຊັບເດີມທີ່ຕົກທອດແກ່ພວກກ່ຽວກໍໃຫ້ແບ່ງປັນເປັນພູດສະເໝີກັນເວັ້ນແຕ່ຊັບເດີມຂອງຜູ້ເສຍຊີວິດທີ່ໄດ້ກຳນົດໄວ້ໃນມາດຕາທີ 12 ກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ;
2. ຖ້າວ່າຜູ້ເສຍຊີວິດຫາກມີ ລູກຄີງ, ລູກລ້ຽງ ແລະ ລູກນ້າມໍຣະດົກເປັນພູດສິນສົມສ້າງຂອງຜູ້ກ່ຽວໃຫ້ແບ່ງເປັນພູດສະເໝີກັນ;
3. ລູກລ້ຽງມີສິດຮັບພູດທີ່ເປັນຊັບເດີມຂອງຜູ້ເສຍຊີວິດ ຄືກັນກັບລູກຄີງ ສຳລັບລູກນ້າບໍ່ມີສິດໄດ້ຮັບພູດ ທີ່ເປັນຊັບເດີມຂອງພໍ່ນ້າ ແລະ ແມ່ນ້າ ທີ່ເສຍຊີວິດ;
4. ລູກລ້ຽງ ບໍ່ມີສິດສືບທອດມູນມໍລະດົກທີ່ດິນ ຂອງຜູ້ເປັນພໍ່ແມ່ເດີມຂອງຕົນອີກ ເວັ້ນເສຍແຕ່ພິໄນກຳ ຈາກພໍ່ແມ່ເດີມມອບໃຫ້ຕົນເທົ່ານັ້ນ;

ສຳລັບລູກຄີງ, ລູກລ້ຽງ, ລູກນ້າ ທີ່ໄດ້ລ້ຽງດູ ເບິ່ງແຍງພໍ່ແມ່ຕະຫລອດຮອດເສຍຊີວິດ ແລະ ມ້ຽນຄາບສິ່ງສະການ ກໍຈະໄດ້ຮັບສ່ວນແບ່ງມູນມໍຣະດົກທີ່ດິນຂອງຜູ້ເສຍຊີວິດໜຶ່ງພູດ

## ການສືບທອດມູນມໍລະດົກທີ່ດິນຂອງລູກທີ່ຢູ່ໃນທ້ອງແມ່

ລູກທີ່ຍັງຢູ່ໃນທ້ອງແມ່ ກໍມີສິດແບ່ງປັນມູນມໍຣະດົກທີ່ຕົກເປັນພູດຂອງຜູ້ເສຍຊີວິດເຊັ່ນດຽວກັນ, ແມ່ເປັນຜູ້ຄຸ້ມຄອງພູດຂອງຜູ້ກ່ຽວໄວ້;

## ການແບ່ງປັນມູນມໍຣະດົກທີ່ດິນລະຫວ່າງ ຜົວ ຫລື ເມຍທີ່ຍັງມີຊີວິດຢູ່ ແລະ ລູກ

ໃນກໍລະນີທີ່ຜົວ ຫລື ເມຍຫາກເສຍຊີວິດໂດຍໄດ້ປະເມຍ ຫລື ຜົວ ແລະ ລູກໄວ້ກໍແມ່ນລູກເປັນຜູ້ມີສິດຮັບມູນມໍຣະດົກທີ່ດິນທີ່ເປັນຊັບເດີມຂອງຜູ້ທີ່ເສຍຊີວິດ ສາມສ່ວນສີ່ ແລະ ໜຶ່ງສ່ວນສີ່ແມ່ນເມຍ ຫຼື ຜົວທີ່ຍັງມີຊີວິດຢູ່ເປັນຜູ້ຮັບຕາມກົດໝາຍ.

ສ່ວນສິນສົມສ້າງນັ້ນໃຫ້ແບ່ງເຄິ່ງ, ເຄິ່ງໜຶ່ງໃຫ້ເມຍ ຫລື ຜົວທີ່ຍັງມີຊີວິດຢູ່ ແລະ ອີກເຄິ່ງໜຶ່ງນັ້ນມອບໃຫ້ແກ່ພວກລູກແບ່ງປັນເປັນພູດສະເໝີກັນ.

ເມຍ ຫລື ຜົວທີ່ຍັງມີຊີວິດຢູ່ນັ້ນມີສິດຄຸ້ມຄອງຊັບທີ່ຕົກທອດເປັນຂອງລູກທີ່ຍັງບໍ່ທັນເຖິງກະສຽນອາຍຸ.

## ການແບ່ງປັນມູນມໍຣະດົກທີ່ດິນລະຫວ່າງ ຜົວ ຫລື ເມຍ ທີ່ຍັງມີຊີວິດຢູ່ ແລະ ຍາດສາຍຕັ້ງ

ໃນກໍລະນີທີ່ຜົວ ຫລື ເມຍຊຶ່ງບໍ່ມີລູກຫາກໄດ້ເສຍຊີວິດໄປຍັງເຫລືອແຕ່ເມຍ ຫລື ຜົວ ແລະ ຍາດສາຍຕັ້ງ ການແບ່ງປັນມູນມໍຣະດົກທີ່ດິນໃຫ້ປະຕິບັດດັ່ງນີ້:

1. ເມຍ ຫລື ຜົວທີ່ຍັງມີຊີວິດຢູ່ນັ້ນຈະໄດ້ຮັບສ່ວນແບ່ງປັນ ໜຶ່ງສ່ວນສາມຂອງຊັບເດີມຂອງຜູ້ເສຍຊີວິດ ແລະ ອີກສອງສ່ວນສາມນັ້ນ ໃຫ້ແບ່ງແກ່ຍາດສາຍຕັ້ງເປັນພູດສະເໝີກັນ.
2. ເມຍ ຫລື ຜົວທີ່ຍັງມີຊີວິດຢູ່ນັ້ນຈະໄດ້ຮັບສິນສົມສ້າງທັງໝົດ ຊຶ່ງຕົກເປັນຂອງຜູ້ທີ່ເສຍຊີວິດເທົ່ານັ້ນ.
3. ຍາດສາຍຕັ້ງຈະໄດ້ຮັບມູນມໍຣະດົກທີ່ເປັນຊັບເດີມຂອງຜູ້ທີ່ເສຍຊີວິດຕາມກົດໝາຍຕາມລຳດັບໃກ້ຊິດກັບຜູ້ທີ່ເສຍຊີວິດ;

## ການແບ່ງປັນມູນມໍຣະດົກທີ່ດິນ ລະຫວ່າງ ຍາດພີ່ນ້ອງສາຍຂວາງ

ຖ້າວ່າຜູ້ທີ່ເສຍຊີວິດຫາກບໍ່ມີລູກ ແລະ ບໍ່ມີຍາດສາຍຕັ້ງ ແຕ່ຫາກຍັງມີຜົວ ຫລື ເມຍນັ້ນຍາດພີ່ນ້ອງສາຍຂວາງ ຈະໄດ້ຮັບມູນມໍຣະດົກທີ່ດິນ ທີ່ເປັນຊັບເດີມຂອງຜູ້ເສຍຊີວິດ ພຽງແຕ່ເຄິ່ງໜຶ່ງເທົ່ານັ້ນ ສ່ວນອີກເຄິ່ງໜຶ່ງ ແລະ ສິນສົມສ້າງທັງໝົດນັ້ນຈະຕົກເປັນຂອງເມຍ ຫລື ຜົວ ທີ່ຍັງມີຊີວິດຢູ່.

ການແບ່ງປັນມູນມໍຣະດົກທີ່ດິນລະຫວ່າງຍາດພີ່ນ້ອງສາຍຂວາງນັ້ນ ໃຫ້ແບ່ງປັນເປັນພູດສະເໝີກັນ.

## ສິດສືບທອດມູນມໍຣະດົກທີ່ດິນຜົວເມຍທີ່ແຍກກັນຢູ່

ຜົວເມຍທີ່ແຍກກັນຢູ່ຕ່າງຫາກ ແຕ່ຍັງບໍ່ທັນໄດ້ຢ່າຮ້າງກັນຖືກຕ້ອງຕາມກົດໝາຍນັ້ນ ກໍຍັງມີສິດສືບທອດມູນມໍຣະດົກຂອງກັນ ແລະ ກັນໄດ້ຢູ່ ເມື່ອຜູ້ໃດຜູ້ໜຶ່ງເສຍຊີວິດ.

## ມູນມໍຣະດົກທີ່ດິນທີ່ບໍ່ມີຜູ້ສືບທອດ

ເມື່ອບຸກຄົນຜູ້ໃດຜູ້ໜຶ່ງຫາກໄດ້ເສຍຊີວິດ ໂດຍບໍ່ມີຜູ້ສືບທອດມູນມໍຣະດົກທີ່ດິນ ຫຼື ບໍ່ຮູ້ວ່າຜູ້ສືບທອດຢູ່ໃສພາຍໃນກຳນົດ ຫົກເດືອນ ຫາກບໍ່ມີຜູ້ໃດມາທວງຫາວເອົາແລ້ວ ມູນມໍຣະດົກທີ່ດິນທັງໝົດຈະແມ່ນລັດເປັນຜູ້ຄຸ້ມຄອງໄວ້.

ຖ້າຫາກໝົດອາຍຸຄວາມໃນການຮ້ອງຟ້ອງຕາມທີ່ໄດ້ບົ່ງໄວ້ໃນມາດຕາ 40 ກົດໝາຍການສືບທອດມູນມໍຣະດົກ ທີ່ດິນດັ່ງກ່າວກໍຈະຕົກເປັນກຳມະສິດຂອງລັດ.

ພະນັກງານທະບຽນສານ ຫລື ນາຍບ້ານ ທີ່ໄດ້ເຂົ້າຮ່ວມໃນການເປີດການສືບທອດ ຫຼື ພິໄນກຳ ການສືບທອດມູນມໍຣະດົກທີ່ດິນນັ້ນ ເປັນຜູ້ກຳນົດເອົາຊັບຂອງຜູ້ທີ່ເສຍຊີວິດນັ້ນສ່ວນໃດສ່ວນໜຶ່ງ ເພື່ອໄປໃຊ້ຈ່າຍໃນການມ້ຽນຄາບສິ່ງສະການ ແລະ ຊຳລະໜີ້ສິນຂອງຜູ້ທີ່ເສຍຊີວິດ (ນີ້ແມ່ນສິດ ແລະ ພັນທະຂອງບັນຜູ້ສືບທອດມູນມໍຣະດົກທີ່ຈະຕ້ອງໄດ້ປະຕິບັດ).


ສະໜັບສະໜູນການພິມໂດຍ:

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra
Swiss Agency for Development and Cooperation SDC

Village Focus International

Rights-LINK

Mennonite Central Committee



ສອບຖາມຂໍ້ມູນເພີ່ມເຕີມ:

**ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ**

**ອົງການຄຸ້ມຄອງທີ່ດິນ**

ໂທ 021 263225, ແຟັກ 021 262300

ອົງການ ຄຸ້ມຄອງທີ່ດິນ ປະຈຳແຂວງ.

ອົງການ ຄຸ້ມຄອງທີ່ດິນ ປະຈຳເມືອງ.

ໜ່ວຍງານທີ່ດິນ ປະຈຳບ້ານ.


ອ ຄ ດ

**ອົງການຄຸ້ມຄອງທີ່ດິນ**

# ການສືບທອດ ມູນມໍຣະດົກທີ່ດິນ

## 1. ມູນມໍຣະດົກທີ່ດິນ

ມູນມໍຣະດົກທີ່ດິນແມ່ນຊັບສິນບັດປະເພດທີ່ດິນເຊິ່ງເປັນກຳມະສິດຂອງຜູ້ເສຍຊີວິດລວມທັງສິດ ແລະ ພັນທະຂອງຜູ້ກ່ຽວເວັ້ນແຕ່ສິດ ແລະ ພັນທະຊຶ່ງກົດໝາຍແລະ ສັນຍາໄດ້ກຳນົດໄວ້ໃຫ້ຜູ້ເສຍຊີວິດຕ້ອງໄດ້ປະຕິບັດດ້ວຍຕົນເອງໃນເວລາທີ່ຜູ້ກ່ຽວຍັງມີຊີວິດຢູ່ນັ້ນສິດນຳໃຊ້ທີ່ດິນຂອງຜູ້ທີ່ເສຍຊີວິດ. ມູນມໍຣະດົກທີ່ດິນ ມີຊັບເດີມ ແລະ ສິນສົມສ້າງ.

**ຊັບເດີມ**ແມ່ນສິດໃຊ້ທີ່ດິນທີ່ຜົວຫຼືເມຍໄດ້ມາກ່ອນການແຕ່ງດອງ ຫຼື ແມ່ນສິດນຳໃຊ້ທີ່ດິນທີ່ໄດ້ຈາກການສືບທອດມູນມໍຣະດົກ ຫຼື ຈາກການມອບ, ການຍົກຊັບໃຫ້ຜົວ ຫຼື ເມຍໂດຍສະເພາະພາຍຫຼັງການແຕ່ງດອງ.

**ສິນສົມສ້າງ** ແມ່ນສິດນຳໃຊ້ທີ່ດິນທີ່ຄູ່ຜົວ ຫຼື ເມຍນັ້ນສ້າງສາ ແລະ ຫາມາໄດ້ໃນເວລາເປັນຜົວເມຍນຳກັນ.

## 2. ການສືບທອດມູນມໍຣະດົກທີ່ດິນ

ການສືບທອດມູນມໍຣະດົກທີ່ດິນ ແມ່ນການຕົກທອດສິດນຳໃຊ້ ທີ່ດິນ ຂອງຜູ້ທີ່ເສຍຊີວິດໃຫ້ແກ່ຜູ້ທີ່ມີສິດສືບທອດມູນມໍຣະດົກທີ່ດິນ ຕາມກົດໝາຍ ຫຼື ພິໄນກຳ.

## 3. ຜູ້ສືບທອດມູນມໍຣະດົກທີ່ດິນ

ຜູ້ມີສິດສືບທອດມູນມໍຣະດົກທີ່ດິນຕາມລຳດັບດັ່ງ ລຸ່ມນີ້:

1. ຜູ້ສືບທອດມູນມໍຣະດົກທີ່ດິນມີ ລູກ (ລູກຄີງ, ລູກລ້ຽງ, ລູກນ້າ),ຂອງຜູ້ເສຍຊີວິດ;
2. ຜົວ ຫຼື ເມຍ ຂອງເຈົ້າຂອງມູນມໍຣະດົກທີ່ດິນທີ່ຍັງມີຊີວິດຢູ່.
3. ຍາດສາຍຕັ້ງ ມີ ພໍ່, ແມ່, ປູ່ ຍ່າ, ພໍ່ເຖົ້າ, ແມ່ເຖົ້າ, ທວດ,ຂອງຜູ້ເສຍຊີວິດ;
4. ຍາດສາຍຂວາງ ມີ ອ້າຍ, ເອື້ອຍ, ນ້ອງ, ລຸງ, ປ້າ, ອາວ, ອາ, ນ້າບ່າວ, ນ້າສາວ, ຫຼານ,ເຫຼນ,ຫຼ້ອນ ຂອງຜູ້ເສຍຊີວິດ;
5. ຖ້າເຈົ້າຂອງມູນມໍຣະດົກບໍ່ມີລູກ, ບໍ່ມີຜົວ ຫຼື ເມຍ ແລ້ວຍາດພີ່ນ້ອງ ລັດ, ນິຕິບຸກຄົນ, ບຸກຄົນອື່ນ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພິໄນກຳເປັນລາຍລັກອັກສອນ

ການເຮັດພິໄນກຳເປັນລາຍລັກອັກສອນ ອາດຈະຂຽນດ້ວຍເຈົ້າມູນມໍຣະດົກເອງ. ຖ້າຫາກຜູ້ອື່ນຂຽນໃຫ້ກໍຕ້ອງມີພະຍານຢ່າງໜ້ອຍ ສາມຄົນເຂົ້າຮ່ວມນຳ ແຕ່ຕ້ອງຮັກສາຄວາມລັບໄວ້ຈົນກວ່າຈະມີການເປີດການສືບທອດມູນມໍຣະດົກ.

ໃນພິໄນກຳນັ້ນ ຕ້ອງບອກສະຖານທີ່, ວັນ, ເດືອນ, ປີ ເຮັດພິໄນກຳ, ປະເພດ ແລະ ຈຳນວນຊັບທີ່ຈະມອບ, ຊື່ ແລະ ນາມສະກຸນຂອງຜູ້ມອບ ແລະ ຜູ້ຮັບ, ຜູ້ຂຽນ ແລະ ຂອງພະຍານ.

ຜູ້ມອບ, ຜູ້ຂຽນ ແລະ ພະຍານຕ້ອງລົງລາຍເຊັນ ຫລື ແປະໂປ້ມືໃສ່ພິໄນກຳ.

ພິໄນກຳນັ້ນ ຫລັງຈາກເຮັດແລ້ວຕ້ອງໃສ່ຊອງຕິດຄັດ ແລ້ວນຳໄປຂຶ້ນທະບຽນທີ່ສຳນັກງານທະບຽນສານແຫ່ງລັດ ຫລື ນາຍບ້ານ ບ່ອນເຈົ້າມູນມໍຣະດົກຢູ່.



## ກໍລະນີທີ່ພາໃຫ້ມີການສືບທອດມູນມໍຣະດົກຕາມກົດໝາຍ

## ການສືບທອດມູນມໍຣະດົກຕາມກົດໝາຍຈະມີຂຶ້ນໄດ້ໃນກໍລະນີ:

1. ມູນມໍຣະດົກທີ່ບໍ່ໄດ້ເຮັດພິໄນກຳມອບໃຫ້ບຸກຄົນໃດບຸກຄົນໜຶ່ງສືບທອດ;
2. ພິໄນກຳເປັນໂມຄະ ຫລື ຜູ້ສືບທອດມູນມໍຣະດົກຕາມພິໄນກຳ ນັ້ນໄດ້ເສຍຊີວິດກ່ອນການເປີດການສືບທອດ;
3. ຜູ້ສືບທອດມູນມໍຣະດົກຕາມພິໄນກຳຫາກບໍ່ຮັບເອົາການສືບທອດ;
4. ມູນມໍຣະດົກທີ່ຍັງເຫລືອຈາກການສືບທອດຕາມພິໄນກຳ.



## ຂອບເຂດສິດໃນການມອບ ຫລື ຍົກຊັບ ຫລື ເຮັດພິໄນກຳ

1. ເມື່ອຕົນຍັງມີຊີວິດຢູ່ເຈົ້າມູນມໍຣະດົກ ບໍ່ມີສິດມອບ ຫລື ຍົກຊັບໂດຍພັງສີມອບ, ຍົກຊັບ ຫລື ໂດຍພິໄນກຳ ມອບຊັບທັງໝົດຂອງຕົນໃຫ້ລູກຜູ້ໃດຜູ້ໜຶ່ງ ຫລື ບຸກຄົນອື່ນ ຖ້າວ່າຜູ້ກ່ຽວຫາກມີລູກສືບທອດຢູ່.
2. ການມອບ ຫລື ການຍົກຊັບ ຫລື ເຮັດພິໄນກຳໃຫ້ປະຕິບັດດັ່ງນີ້:
3. ຖ້າວ່າເຈົ້າມູນມໍຣະດົກຫາກມີລູກຜູ້ໜຶ່ງ ແມ່ນ ບໍ່ໃຫ້ກາຍເຄິ່ງໜຶ່ງ ຂອງຊັບທັງໝົດ;
4. ຖ້າວ່າເຈົ້າມູນມໍຣະດົກຫາກມີລູກສອງຄົນ ແມ່ນ ບໍ່ໃຫ້ກາຍໜຶ່ງ ສ່ວນສາມຂອງຊັບທັງໝົດ;
5. ຖ້າວ່າເຈົ້າມູນມໍຣະດົກນັ້ນ ຫາກມີລູກສາມຄົນຂຶ້ນໄປ ແມ່ນ ບໍ່ໃຫ້ກາຍ ໜຶ່ງສ່ວນສີ່ຂອງຊັບທັງໝົດ.



## 4. ຜູ້ເສຍສິດໃນການສືບທອດມູນມໍຣະດົກທີ່ດິນ

ຜູ້ເສຍສິດສືບທອດມູນມໍຣະດົກທີ່ດິນ ຕາມກົດໝາຍ ຫຼື ຕາມພິໄນກຳມີ ດັ່ງລຸ່ມນີ້:

1. ຜູ້ທີ່ຖືກສານຕັດສິນວ່າ ມີເຈດຕະນາ ຫຼື ພະຍາຍາມເຮັດໃຫ້ເຈົ້າ ມູນມໍຣະດົກທີ່ດິນ ຫຼື ຜູ້ມີສິດສືບທອດມູນມໍລະດົກທີ່ດິນຜູ້ໃດຜູ້ໜຶ່ງເສຍຊີວິດ ຫຼື ບາດເຈັບສາຫັດ ເພື່ອຍາດຊິງເອົາມູນມໍລະດົກທີ່ດິນ;
2. ຜູ້ທີ່ໄດ້ທຳລາຍ, ປິດບັງ ຫຼື ປອມແປງພິໄນກຳທັງໝົດ ຫຼື ບາງສ່ວນ;
3. ຜູ້ທີ່ຢູ່ແຂວງ ຫຼື ເມືອງດຽວກັນກັບຜູ້ທີ່ເສຍຊີວິດ ເມື່ອຮູ້ຂ່າວການເສັຍຊີວິດແລ້ວຫາກບໍ່ມາມ້ຽນຄາບສິ່ງສະການ ຫຼື ບໍ່ໄດ້ມອບໝາຍໃຫ້ຄົນມາຮ່ວມແທນຕົນໂດຍບໍ່ມີເຫດຜົນ;
4. ຜູ້ທີ່ໄດ້ຂົ່ມຂູ່ເຈົ້າມູນມໍຣະດົກທີ່ດິນໃຫ້ເຮັດ, ຖອນ ຫຼື ປ່ຽນແປງພິໄນກຳທັງໝົດ ຫຼື ສ່ວນໃດສ່ວນໜຶ່ງ;
5. ຜູ້ທີ່ໄດ້ປິດບັງ ຫຼື ຊຸກເຊື່ອງຜູ້ກະທຳຜິດຕໍ່ຊີວິດ ຫຼື ສຸຂະພາບຂອງເຈົ້າມູນມໍຣະດົກທີ່ດິນຊຶ່ງໃຫ້ໄດ້ຮັບບາດເຈັບສາຫັດ, ເສຍອົງຄະ, ເປັນບ້າເສຍຈິດ;
6. ຜູ້ທີ່ຖືກສານຕັດສິນວ່າໄດ້ໃສ່ຮ້າຍເຈົ້າມູນມໍ່ະດົກທີ່ດິນ ຫຼື ໃສ່ຮ້າຍ ຜູ້ມີສິດສືບທອດມູນມໍລະດົກທີ່ດິນດ້ວຍກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 163 ຂອງກົດໝາຍອາຍາ;
7. ບຸກຄົນ ທີ່ໄດ້ກ່າວມານີ້ຈະເສຍສິດສືບທອດມູນມໍລະດົກທີ່ດິນໄດ້ກໍຕໍ່ເມື່ອ ເຈົ້າມູນມໍລະດົກທີ່ດິນໄດ້ສະແດງເຈດຈຳນົງຂອງຕົນອອກເປັນລາຍລັກອັກສອນເທົ່ານັ້ນ.

ຖ້າວ່າບຸກຄົນທີ່ກ່າວມາຂ້າງເທິງນີ້ ຫາກໄດ້ປະພຶດບໍ່ຊອບທຳ ບໍ່ຢູ່ພາຍໃຕ້ການຄຸ້ມຄອງພໍ່ແມ່ ບໍ່ເບິ່ງແຍງພໍ່ແມ່ໃນແວລາເຖົ້າແກ່ ຫລື ເຈັບເປັນທັ້ງໆທີ່ຮູ້ວ່າຕົນມີຄວາມອາດສາມາດຢູ່ແລ້ວ ກໍຈະຖືວ່າເປັນຜູ້ເສຍສິດໃນການສືບທອດມູນມໍຣະດົກທີ່ດິນ ແລະ ຈະໄດ້ປະຕິບັດດັ່ງດຽວ ຕາມວັກ 2 ມາດຕາ 49 ຂອງກົດໝາຍວ່າດ້ວຍ ການສືບທອດມູນມໍຣະດົກ.

## ການຮັບມູນມໍຣະດົກທີ່ດິນ

ຜູ້ສືບທອດມູນມໍຣະດົກທີ່ດິນ ຕາມກົດໝາຍ ຫລື ຕາມພິໄນກຳ ທີ່ໄດ້ແຈ້ງເຈດຈຳນົງຂອງຕົນເພື່ອຮັບເອົາມູນມໍຣະດົກ ຕໍ່ສຳນັກງານທະບຽນສານ ຫລື ນາຍບ້ານ ກໍຈະຖືວ່າເປັນຜູ້ຮັບມູນມໍຣະດົກທີ່ດິນ. ຕ້ອງດຳເນີນການຮັບເອົາມູນມໍຣະດົກທີ່ດິນໃນໄລຍະຫົກເດືອນ ນັບແຕ່ມື້ທີ່ໄດ້ເປີດເອກະສານ ຫຼື ພິໄນກຳ ການສືບທອດມູນມໍຣະດົກທີ່ດິນເປັນຕົ້ນໄປ.ໃນກໍລະນທີ່ຜູ້ສືບທອດມູນມໍຣະດົກທີ່ດິນຜູ້ໃດຜູ້ໜຶ່ງຫາກໄດ້ສະລະມູນມໍຣະດົກທີ່ດິນ ຜູ້ທີ່ຈະຮັບມູນມໍຣະດົກທີ່ດິນ ຊຶ່ງເປັນພູດຂອງຜູ້ສະລະນັ້ນ ຕ້ອງສະແດງເຈດຈຳນົງຂອງຕົນວ່າ ຈະຮັບເອົາມູນມໍຣະດົກທີ່ດິນດັ່ງກ່າວພາຍໃນໄລຍະເວລາທີ່ຍັງເຫລືອ. ຖ້າວ່າກຳນົດເວລາທີ່ຍັງເຫລືອນັ້ນຫາກຫລຸດ ສາມເດືອນ ຜູ້ທີ່ຈະຮັບນັ້ນມີສິດຮ້ອງຂໍຕໍ່ສານ ໃຫ້ຕໍ່ເວລາອອກຕື່ມອີກກໍໄດ້ ແຕ່ບໍ່ໃຫ້ເກີນສາມເດືອນ. ສຳນັກງານທະບຽນສານ ຫລື ນາຍບ້ານຕ້ອງອອກໃບຢັ້ງຢືນການຮັບມູນມໍຣະດົກທີ່ດິນ ໃຫ້ແກ່ຜູ້ສືບທອດ ເພື່ອເປັນຫລັກຖານ.

## 3. ການເສຍສິດໃນການຮັບມູນມໍຣະດົກທີ່ດິນ

ພໍ່ແມ່ທີ່ຖືກຕັດຂາດຈາກຄວາມເປັນພໍ່ແມ່ຕາມຄຳຕັດສິນຂອງສານຈະບໍ່ມີສິດສືບທອດມູນມໍຣະດົກຂອງລູກ, ສ່ວນລູກກໍ່ຈະບໍ່ມີສິດສືບທອດມູນມໍລະດົກ ຂອງພໍ່ແມ່ເຊັ່ນດຽວກັນ. ໃນກໍລະນີທີ່ພໍ່ແມ່ ຫາກບໍ່ປະຕິບັດພັນທະໃນການລ້ຽງດູລູກ ຕາມຄຳຕັດສິນຂອງສານກໍຈະບໍ່ມີສິດສືບທອດມູນມໍຣະດົກທີ່ດິນຂອງລູກສ່ວນລູກທີ່ເຖິງກະສຽນອາຍຸຫາກບໍ່ປະຕິບັດພັນທະໃນການລ້ຽງດູພໍ່ແມ່ຕາມຄຳຕັດສິນຂອງສານກໍຈະບໍ່ມີສິດສືບທອດມູນມໍຣະດົກຂອງພໍ່ແມ່ເຊັ່ນດຽວກັນ.

## ການສະລະມູນມໍຣະດົກທີ່ດິນ

ຜູ້ສືບທອດມູນມໍຣະດົກທີ່ດິນຕາມກົດໝາຍ ຫລື ຕາມພິໄນກຳມີສິດສະລະມູນມໍຣະດົກທີ່ດິນໃຫ້ບຸກຄົນ, ການຈັດຕັ້ງຂອງລັດ, ມູນນິທິ, ກອງທຶນໃດໜຶ່ງ.ການສະລະມູນມໍຣະດົກທີ່ດິນແມ່ນໃຫ້ປະຕິບັດພາຍໃນຫົກເດືອນ ນັບແຕ່ມື້ທີ່ໄດ້ເປີດການສືບທອດມູນມໍຣະດົກເປັນຕົ້ນໄປ.

ຜູ້ສະລະມູນມໍຣະດົກທີ່ດິນ ຕ້ອງສະແດງເຈດຈຳນົງຂອງຕົນເປັນລາຍລັກອັກສອນໄວ້ໃນສຳນັກງານທະບຽນສານ ຫລື ນາຍບ້ານ ໂດຍບອກຊື່ ຂອງບຸກຄົນ ຫລື ອົງການຈັດຕັ້ງທີ່ຕົນສະລະໃຫ້.

ໃນກໍລະນີທີ່ບໍ່ໄດ້ບົ່ງຊື່ບຸກຄົນ ຫລື ອົງການຈັດຕັ້ງແລ້ວ ມູນມໍຣະດົກທີ່ດິນນັ້ນກໍຈະຕົກທອດເປັນຂອງຜູ້ສືບທອດຜູ້ອື່ນຕາມກົດໝາຍ.

ຜູ້ທີ່ໄດ້ສະລະພູດມູນມໍຣະດົກທີ່ດິນຂອງຕົນ ແລະ ຜູ້ສືບທອດຂອງຜູ້ກ່ຽວບໍ່ມີສິດທວງເອົາມູນມໍຣະດົກທີ່ດິນທີ່ໄດ້ສະລະແລ້ວນັ້ນຄືນ.

ຜູ້ສືບທອດມູນມໍຣະດົກທີ່ດິນ ທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫລື ຜູ້ບໍ່ມີ ຄວາມສາມາດທາງດ້ານການປະພຶດ ຈະສະລະມູນມໍຣະດົກທີ່ດິນບໍ່ໄດ້ ນອກຈາກໄດ້ຮັບຄວາມຍິນຍອມຂອງພໍ່ແມ່ ຫລື ຜູ້ປົກຄອງເທົ່ານັ້ນ.